# ການຄຸ້ມຄອງສື່ມວນຊົນ

## ນໍາສະເໜີໂດຍ:

## ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

# ເນື້ອໃນນຳສະເໜີ

- ສື່ມວນຊົນແມ່ນຫຍັງ?
- ການແບ່ງຂັ້ນຄຸ້ມຄອງ...
- ນິຕິກຳໃນການຄຸ້ມຄອງສື່ມວນຊົນ
- ສິ່ງທ້າທາຍ, ແລະ ຂໍ້ຄົງຄ້າງ ໃນການຄຸ້ມຄອງສື່ມວນຊົນ
- ວິທີທາງແກ້ໄຂບັນຫາຂໍ້ຄົງຄ້າງໃນການຄຸ້ມຄອງສື່ມວນຊົນ
- ຈັນຍາບັນນັກຂ່າວ-ນັກສື່ມວນຊົນລາວ
- ສົນທະນາ Q & A

# ສື່ມວນຊົນແມ່ນຫຍັງ?




**ສື່ມວນຊົນແມ່ນເອທິຖະແຫຼງຂ່າວ ທີ່ປະກອບດ້ວຍ:**
**ສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ຜະລິດຕະພັນສື່ມວນຊົນ, ມີພາລະບົດບາດເປັນກະບອກສຽງອົງການຈັດຕັ້ງພັກ, ລັດ ແລະ ສັງຄົມ ໃນການໂຄສະນາ, ສຶກສາອົບຮົມ ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ປຸກລະດົມນໍ້າໃຈຮັກຊາດ ເຜີຍແຜ່ຂໍ້ມູນຂ່າວສານ, ເສັດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລໂຊີ, ສາລະຄວາມຮູ້, ສາລະບັນເທີງໃຫ້ແກ່ສັງຄົມ, ປະກອບສ່ວນຕ້ານປະກົດການ ຫຍໍ້ທໍ້ໃນສັງຄົມ ແລະ ຖ້ອຍທຳນອງທີ່ບິດເບືອນຄວາມຈິງ.**

# ການແບ່ງຂັ້ນຄຸ້ມຄອງ

❖ ລັດຖະບານຄຸ້ມຄອງສື່ມວນຊົນ ຢ່າງລວມສູນ...

- ຄະນະໂຄສະນາອົບຮົມສູນກາງພັກ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ)...(ກົມສື່ມວນຊົນ)
- ຄະນະໂຄສະນາອົບຮົມ ແຂວງ, ນະຄອນຫຼວງ (ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ)
- ຫ້ອງການຄະນະໂຄສະນາອົບຮົມ ເມືອງ, ນະຄອນ (ຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ)

## ❖ ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ

**ປະສານສົມທົບກັບ ຂະແໜງໂຄສະນາອົບຮົມ (ຖອທ)**

- **ໃນການຄຸ້ມຄອງ...**
- **ໃນການສົ່ງເສີມວຽກງານສື່ມວນຊົນ...**
- **ໃນການພັດທະນາວຽກງານສື່ມວນຊົນ...**

## ❖ ອົງການຈັດຕັ້ງຂອງສື່ມວນຊົນ

- ອົງການເຈົ້າຂອງສື່ມວນຊົນ...(ອົງການຈັດຕັ້ງພັກ, ລັດ...ສັງຄົມ...ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງອົງການສື່ມວນຊົນ ແລະ ການເຄື່ອນໄຫວວຽກງານດ້ານສື່ມວນຊົນ)

# ອິງການສື່ມວນຊົນ (ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ)

- ເຮັດໜ້າທີ່ໃນການເຜີຍແຜ່ຂໍ້ມູນຂ່າວສານ ຢ່າງຖືກຕ້ອງກັບຄວາມຈິງ ແລະ ເປັນຜົນປະໂຫຍດຕໍ່ປະເທດຊາດ ແລະ ປະຊາຊົນ...
- ຕຳນິຕິຊົມແບບສ້າງສັນຕໍ່ທຸກການເຄື່ອນໄຫວໃນສັງຄົມ, ປະກົດການ ຫຍໍ້ທໍ້ໃນສັງຄົມ...
- ຕອບໂຕ້ການໂຄສະນາໃສ່ຮ້າຍປ້າຍສີ, ບິດເບືອນຄວາມຈິງ...

# ສະມາຄົມນັກຂ່າວແຫ່ງ ສປປ ລາວ

- ເປັນອົງການຈັດຕັ້ງການເມືອງ, ສັງຄົມ, ວິຊາຊີບຂອງຜູ້ເຮັດວຽກ ດ້ານສື່ມວນຊົນ..
- ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ...
- ປົກປ້ອງສິດຜົນປະໂຫຍດອັນຊອບທຳ...

# ອົງການສື່ມວນຊົນ ຄຸ້ມຄອງຫຍັງແດ່?

- ຄຸ້ມຄອງຄົນ
- ຄຸ້ມຄອງ ວັດຖຸເຕັກນິກອຸປະກອນຖະແຫຼງຂ່າວ (ພາຫະນະສື່ມວນຊົນ)
- ຄຸ້ມຄອງເນື້ອໃນ (Contents)

## ❖ ນິຕິກຳໃນການຄຸ້ມຄອງຂໍ້ມູນຂ່າວສານ

**ກົດໝາຍວ່າດ້ວຍສື່ມວນຊົນ ສະບັບປັບປຸງປີ 2016**
**ປະກອບມີ 9 ພາກ 9 ໝວດ ແລະ 85 ມາດຕາ**

- **ມາດຕາ 68: ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

➢ **ໃຊ້ຄວາມຮຸນແຮງ, ບັງຄັບ, ໃສ້ຮ້າຍປ້າຍສີ, ໝິ່ນປະໝາດ, ຮ້າຍດ່າ, ໃຊ້ຄວາມຫຍາບຄາຍ, ນາບຂູ່...**

# ການຄຸ້ມຄອງສື່ສັງຄົມອອນລາຍ

ກົດໝາຍວ່າດ້ວຍສື່ມວນຊົນ, ສະບັບປັບປຸງ ເລກທີ 019/ສພຊ ລົງວັນທີ 11 ພະຈິກ 2016, ມາດຕາ 60 ລະບຸໄວ້ວ່າ:

ການສ້າງຕັ້ງໜ້າຂ່າວອອນລາຍ ຕ້ອງໄດ້ຈົດທະບຽນນຳພາກສ່ວນ ຄຸ້ມຄອງສື່ມວນຊົນ

# ກະຊວງຖວທ ໄດ້ອອກແຈ້ງການວ່າດ້ວຍການສ້າງຕັ້ງໜ້າຂ່າວ ອອນລາຍ ເພື່ອບໍລິການຂ່າວສານໃຫ້ສັງຄົມ ຢູ່ ສປປລາວ ສະບັບເລກທີ 252/ຖວທ, ລົງວັນທີ 17 ກັນຍາ 2020





ໃຫ້ທຶນໂດຍ
ສະຫະພາບ ເອີຣົບ

care

# ແບບຟອມລົງທະບຽນການສ້າງຕັ້ງໜ້າອອນລາຍ



# ປະມວນກົດໝາຍອາຍາ, ສະບັບປີ 2017

**ມາດຕາ 117 ການໂຄສະນາຕ້ານ ສປປ ລາວ**

ບຸກຄົນໃດ ຫາກໄດ້ໂຄສະນາໃສ່ຮ້າຍປ້າຍສີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ບິດເບືອນແນວທາງຂອງພັກ ແລະ ນະໂຍບາຍຂອງລັດ, ປ່າວຂ່າວອະກຸສົນ, ເຮັດໃຫ້ມີຄວາມວຸ້ນວາຍ ດ້ວຍການເວົ້າ, ການຂຽນ, ການພິມ, ໜັງສືພິມ, ຮູບເງົາ, ວີດີໂອ, ຮູບພາບ, ເອກະສານ, ສື່ທາງເອເລັກໂຕຣນິກ ຫຼື ດ້ວຍຮູບການອື່ນ ທີ່ມີເນື້ອໃນຕ້ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຮັດໃຫ້ອຳນາດແຫ່ງລັດອ່ອນເພຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

# ສິ່ງທ້າທາຍ, ແລະ ຂໍ້ຄົງຄ້າງ ໃນການຄຸ້ມຄອງສື່ມວນຊົນ

- ຈັນຍາບັນໃນການນຳໃຊ້ສື່ສັງຄົມອອນລາຍ (Media Literacy)
- ລະດັບຄວາມຮູ້ ແລະ ຈຳນວນບຸກຄະລາກອນ ຍັງບໍ່ສົມ ຄູ່ກັບໃນຍຸກ Digital ນີ້
- ການຕອບສະໜອງ ວັດຖຸເຕັກນິກອຸປະກອນ ຖະແຫຼງຂ່າວ(ພາຫະນະສື່ມວນຊົນ) ຍັງບໍ່ທັນພ້ອມ ແລະ ພຽງພໍ
- ຄຸ້ມຄອງເນື້ອໃນ (Contents) ຍັງບໍ່ໄດ້ລົງເລິກຢ່າງເຖິງຖອງ

# ວິທີທາງແກ້ໄຂບັນຫາຄົງຄ້າງໃນການຄຸ້ມຄອງສື່ມວນຊົນ

- ສຶກສາອົບຮົມແນວຄິດ + ຈັນຍາບັນໃນການນຳໃຊ້ສື່ ສັງຄົມອອນລາຍ (Media Literacy)
- ຍົກສູງ, ຝຶກອົບຮົມລະດັບຄວາມຮູ້ໃຫ້ແກ່ບຸກຄະລາກອນ ສື່ມວນຊົນຢ່າງສະໝ່ຳສະເໝີ ໃນຍຸກ Digital ນີ້
- ລັດຕ້ອງຕອບສະໜອງ ວັດຖຸເຕັກນິກອຸປະກອນ ຖະແຫຼງຂ່າວ (ພາຫະນະສື່ມວນຊົນ) ໃຫ້ພຽງພໍ
- ສ້າງເນື້ອໃນ (Contents)ໃຫ້ຫຼາກຫຼາຍຮູບຫຼາຍສີ, ຕອບສະໜອງໄດ້ຫຼາຍຮຸ່ນຄົນ ແລະ ວ່ອງໄວທັນການ.

# ຫຼັກການການເຄື່ອນໄຫວວຽກງານສື່ມວນຊົນ:

- ຮັບປະກັນການເປັນປາກກະບອກສຽງຂອງການ ຈັດຕັ້ງພັກ, ລັດ, ແລະ ສັງຄົມ ໂດຍສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ;
- ຮັບປະກັນລັກສະນະຂອງສື່ມວນຊົນ;
- ຮັບປະກັນໃຫ້ພົນລະເມືອງລາວໄດ້ປະຕິບັດສິດ ເສລີພາບ, ແລະ ພັນທະຂອງຕົນ ດ້ານສື່ມວນຊົນ, ປົກປ້ອງຜູ້ສະໜອງຂໍ້ມູນຂ່າວສານ, ປະກອບຄຳເຫັນ, ສະແດງທັດສະນະ-ຕຳນິຕິຊົມ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

# ການນຳພາທາງສຽງສັງຄົມ ຫຼື ການຕອບຕ້ານ...

## 1. ລັກສະນະຕົວຈິງ...





ໃຫ້ທຶນໂດຍ ສະຫະພາບ ເອີຣົບ

care

Lao Journalists Association

# 2. ລັກສະນະແນະນຳ...






ໃຫ້ທຶນໂດຍ ສະຫະພາບ ເອີຣົບ

care

Lao Journalists Association

# 3. ລັກສະນະສຶກສາອົບຮົມ



# 4. ລັກສະນະຕໍ່ສູ້








ເວົ້າບ່ອນມັນຈົບໂລດ
ເກັບກູ້ອີກ 100 ປີກະບໍ່ເໝັດ
ລະເບີດໜັກຕັ້ງ 3,000,000 ໂຕ
ຫຼາຍກວ່າ 270,000,000 ລູກ
ຕັ້ງແຕ່ປີ 1964-2008 ຕາຍແລ້
50,000 ກວ່າຄົນ
ໃນ 17 ແຂວງທົ່ວປະເທດລາວ

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

care

Lao Journalists Association

ນຳສະເໜີໂດຍ: ທ່ານ ວໍຣະສັກ ປຣະວົງ ວຽງຄຳ
ຄະນະບໍລິຫານງານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ
ອະດີດຮອງຫົວໜ້າຜູ້ອຳນວຍການໃຫຍ່ ວິທະຍຸກະຈາຍສຽງແຫ່ງຊາດລາວ
ໂທລະສັບ: 020-55514658
Email: pvorasack@gmail.com


ຂໍຂອບໃຈ